ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ຄະນະເລຂາທິການລັດຖະບານ

ເລກທີ 887/ຄລບ.

ນະຄອນຫຼວງວຽງຈັນ, ວັນທີ 29...5...09

# ແຈ້ງການ

ຮຽນ : - ທ່ານລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້.

- ບັນດາທ່ານເຈົ້າແຂວງ ໃນທົ່ວປະເທດ.

ເລື່ອງ : ສະພາບການຈັດສັນປ່າຜະລິດແບບຍືນນານ ທີ່ລັດຖະບານຮ່ວມມື ກັບທະນາຄານໂລກ ແລະ ລັດຖະບານແຟງລັງ.

- ອີງຕາມເອກະສານສະເໜີ ສະບັບເລກທີ 0062/ກປ, ລົງວັນທີ 25 ພຶດສະພາ 2009 ຂອງ ກະຊວງກະສິກຳ ແລະ ປ່າໄມ້.

- ອີງຕາມການຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 25 ພຶດສະພາ 2009.

ຄະນະເລຂາທິການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ :

" 1. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບບັນດາແຂວງ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ເອົາໃຈໃສ່ປະຕິບັດເນື້ອໃນຈິດໃຈດຳລັດເລກທີ 59/ນຍ, ລົງວັນທີ 02 ພຶດສະພາ 2002 ວ່າດ້ວຍການຄຸ້ມຄອງປ່າຜະລິດແບບຍືນນານ ແລະ ລະບຽບການສະບັບເລກທີ 0204/ກປ, ລົງວັນທີ 03 ກຸມພາ 2003 ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງປ່າຜະລິດແບບຍືນນານ ຢ່າງເຂັ້ມງວດ ແລະ ໃຫ້ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ແລ້ວຊີ້ນຳວິຊາການຂອງຕົນສຳຫຼວດ, ວາງແຜນຈັດສັນປ່າຜະລິດໂດຍໃຫ້ມີການເຂົ້າຮ່ວມຂອງປະຊາຊົນ ຢູ່ໃນແຂວງຂອງຕົນ ໃຫ້ສຳເລັດໃນສົກປີ 2010.

2. ເຂດປ່າຜະລິດໃດທີ່ມີແຜນຈັດສັນເປັນທີ່ຮຽບຮ້ອຍແລ້ວ ໃຫ້ສືບຕໍ່ຄຸ້ມຄອງ ແລະ ພັດທະນານຳໃຊ້ໄປຕາມລະບົບການຈັດສັນແບບຍືນນານ ແລະ ບໍ່ໃຫ້ເຂົ້າໄປບຸກລຸກແບບສະຊາຍ ຢ່າງເດັດຂາດ.

3. ສະເພາະເຂດປ່າຜະລິດທີ່ກຳລັງມີການຮ່ວມມືກັບສາກົນ, ໂດຍສະເພາະແມ່ນເຂດທີ່ມີການຮ່ວມມືກັບທະນາຄານໂລກ ແລະ ລັດຖະບານແຟງລັງນັ້ນ ໃຫ້ເອົາໃຈໃສ່ປະຕິບັດໃຫ້ເປັນຮູບປະທຳໂດຍໄວ ແລະ ຫ້າມເດັດຂາດບໍ່ໃຫ້ເຂົ້າໄປຂຸດຄົ້ນໄມ້ກ່ອນມີແຜນຈັດສັນ ຫຼື ເຂົ້າໄປບຸກລຸກດ້ວຍຮູບການຈັບຈອງດິນ ເພື່ອ

ປູກໄມ້ ແລະ ອື່ນໆ, ຫ້າມບໍ່ໃຫ້ເຂົ້າໄປຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ຫ້າມບໍ່ໃຫ້ເຂົ້າໄປເຮັດກິດຈະການດ້ວຍຮູບການອື່ນໆ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ສອດຄ່ອງກັບລະບຽບກົດໝາຍ. "

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,
ຫົວໜ້າຄະນະເລຂາທິການລັດຖະບານ.

ບ່ອນນຳສົ່ງ

| | |
|---|---|
| - ນາຍົກ-ບັນດາຮອງນາຍົກລັດຖະມົນຕີ | 5 ສະບັບ |
| - ຫ້ອງວ່າການສູນກາງພັກ | 1 ສະບັບ |
| - ກະຊວງແຜນການ ແລະ ການລົງທຶນ | 1 ສະບັບ |
| - ກະຊວງການຕ່າງປະເທດ | 1 ສະບັບ |
| - ເກັບມ້ຽນ | 8 ສະບັບ |

ເຈືອງ ສົມບູນຂັນ